ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື ເລກທີ 127 /ຈຂ-ອປ

ອັດຕະປື,ວັນທີ 30.1.2015

# ຄໍາສັ່ງແນະນໍາຂອງເຈົ້າແຂວງ
# ກ່ຽວກັບການຈັດຕັ້ງປະຕິບັດການເກັບເງິນ
# ພັນທະກອງທຶນພັດທະນາການທ່ອງທ່ຽວຂັ້ນແຂວງຢູ່ດ່ານສາກົນພູເກືອ

---

- ເຖິງ: ພະແນກການ,ອົງການທຽບເທົ່າກອງບັນຊາການ ປກສ - ປກຊ,ບັນດາເມືອງ,ລັດວິສາຫະກິດ ບຸກຄົນພາຍໃນ ແລະ ຕ່າງປະເທດ

ເລື່ອງ: ການຈັດຕັ້ງປະຕິບັດການເກັບເງິນພັນທະກອງທຶນພັດທະນາການທ່ອງທ່ຽວຢູ່ດ່ານສາກົນພູເກືອ

- ອີງຕາມ: ກົດໝາຍວ່າດ້ວຍການທ່ອງທ່ຽວ,ໝວດທີ 4 ມາດຕາ 74-75-76 ພັນທະກອງທຶນທ່ອງທ່ຽວ.
- ອີງຕາມ: ຂໍ້ຕົກລົງຂອງທ່ານເຈົ້າແຂວງລະບັບເລກທີ 1333/ຈຂ ອປ, ວັນທີ 10 / 11/ 2014
- ອີງໃສ່: ບົດບັນທຶກກອງປະຊຸມປຶກສາຫາລືກັນຂອງຄະນະຄຸ້ມຄອງບໍລິຫານກອງທຶນທ່ອງທ່ຽວລະດັບແຂວງຄັ້ງທີ II ໃນຄັ້ງວັນທີ 15/2015, ຢູ່ຫ້ອງປະຊຸມດ່ານສາກົນພູເກືອ. ກ່ຽວກັບການເກັບເງິນກອງທຶນທ່ອງທ່ຽວ.

ເພື່ອເຮັດໃຫ້ພະນັກງານ, ທະຫານ,ຕໍາຫຼວດ,ນັກທຸລະກິດຊາວຄ້າຂາຍ,ຊາວຕ່າງດ້າວ,ຊາວຕ່າງປະເທດ ແລະ ປະຊາຊົນບັນດາເຜົ່າຊັ້ນຄົນຕ່າງໆ ໃນທົ່ວປະເທດເວົ້າລວມ, ເວົ້າສະເພາະແມ່ນພາຍໃນແຂວງອັດຕະປືຮັບຮູ້ເຂົ້າໃຈ ແລະ ປະຕິບັດພັນທະຢ່າງຄົບຖ້ວນໃນເວລາເຂົ້າ-ອອກເມືອງຢູ່ດ່ານສາກົນພູເກືອຕາມລະບຽບການຂອງກອງທຶນການທ່ອງທ່ຽວ.

- ເພື່ອເຮັດໃຫ້ງົບປະມານຂອງລັດ( ກອງທຶນການທ່ອງທ່ຽວ) ແມ່ນສ່ວນໜຶ່ງໄດ້ມາຈາກການປະກອບສ່ວນຂອງບຸກຄົນ,ນິຕິບຸກຄົນ, ທັງພາຍໃນ ແລະ ຕ່າງປະເທດ ( ເສຍຄ່າພັນທະເວລາເຂົ້າ-ອອກ ເມືອງ ). ແລະ ນໍາໃຊ້ກອງທຶນດັ່ງກ່າວ ເພື່ອພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງການທ່ອງທ່ຽວຕາມລະບຽບຂອງກອງທຶນການທ່ອງທ່ຽວທີ່ໄດ້ກໍານົດໄວ້.
- ເພື່ອເຮັດໃຫ້ກອງທຶນການທ່ອງທ່ຽວໄດ້ປະກອບສ່ວນ, ເຂົ້າໃນການພັດທະນາຊັບພະຍາກອນມະນຸດ. ພັດທະນາສິ່ງອໍານວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ, ໂຄສະນາສົ່ງເສີມຕະຫຼາດການ/.

ທ່ອງທ່ຽວ, ກຳນົດມາດຖານການທ່ອງທ່ຽວ ແລະ ການເຄື່ອນໄຫວກິດຈະກຳການທ່ອງທ່ຽວໃຫ້ແຂງແຮງຂຶ້ນກ່ວາເກົ່າ. ທັງປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມແຫ່ງລັດໄດ້ເປັນຢ່າງດີ.

## ເຈົ້າແຂວງອອກຄຳສັ່ງແນະນຳ

1; ມອບໃຫ້ຄະນະຮັບຜິດຊອບຄຸ້ມຄອງບໍລິຫານກອງທຶນທ່ອງທ່ຽວຂັ້ນແຂວງ,ທີ່ໄດ້ຮັບການແຕ່ງຕັ້ງຈາກເຈົ້າແຂວງ, ຄົ້ນຄ້ວາປຶກສາຫາລືກັນວາງແຜນ, ຈັດຕັ້ງປະຕິບັດຫັນເອົາຄຳສັ່ງດັ່ງກ່າວໄປຜັນຂະຫຍາຍເປັນອັນລະອຽດຈະແຈ້ງ, ໂດຍມີການແຕ່ງຕັ້ງພະນັກງານວິຊາການຂະແໜງການທີ່ກ່ຽວຂ້ອງໄປປະຈຳດ່ານ,ເພື່ອຄຸ້ມຄອງຈັດເກັບພັນທະກອງທຶນທ່ອງທ່ຽວດັ່ງກ່າວໃຫ້ໄດ້ຮັບຜົນດີຖືກຕ້ອງຕາມລະບຽບກົດໝາຍ.

2; ມອບໃຫ້, ໃຫ້ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ໂຄສະນາ, ເຜີຍແຜ່ເນື້ອໃນການທ່ອງທ່ຽວຢູ່ພາຍໃນ ແລະ ຕ່າງປະເທດ, ດ້ວຍຫຼາຍລະດັບ ແລະ ຫຼາຍຮູບຫຼາຍສີເພື່ອດຶງດູດນັກທ່ອງທ່ຽວເຂົ້າມາປະເທດເຮົາເວົ້າລວມ,ເວົ້າສະເພາະເຂົ້າມາທ່ອງທ່ຽວແຂວງອັດຕະປືໃຫ້ນັບມື້ນັບຫຼາຍຂຶ້ນ.

3; ພົນລະເມືອງລາວ,ຊາວຕ່າງດ້າວ,ຊາວຕ່າງປະເທດທີ່ເດີນທາງ**ເຂົ້າ-ອອກ**ດ່ານສາກົນພູເກືອຕ້ອງໄດ້ນຳເອົາເອກະສານຕ່າງໆ ໄປແຈ້ງຕໍ່ເຈົ້າໜ້າທີ່ທ່ອງທ່ຽວປະຈຳດ່ານກວດກາເອກະສານເສຍກ່ອນແລ້ວຈິ່ງນຳໄປແຈ້ງຕໍ່ເຈົ້າໜ້າທີ່ ຕຳຫຼວດ **(ຕມ )** ປະຈຳດ່ານ.

4; ມອບໃຫ້ຄະນະຄຸ້ມຄອງດ່ານສາກົນພູເກືອອຳນວຍຄວາມສະດວກ,ດ້ານສະຖານທີ່ພັກເຊົາຂອງພະນັກງານ ແລະ ປະສານສົມທົບຊີ້ນຳເຈົ້າໜ້າທີ່ ຕຳຫຼວດ **( ຕມ)** ປະຈຳດ່ານອຳນວຍຄວາມສະດວກທຸກດ້ານ, ເຮັດໃຫ້ການເກັບເງິນກອງທຶນການທ່ອງທ່ຽວຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບດ້ານການເງິນ.

5; ກຳນົດເວລາຈັດຕັ້ງປະຕິບັດເລີ້ມແຕ່ຕົ້ນເດືອນກຸມພາ 2015 ເປັນຕົ້ນໄປ.

6; ພາຍຫຼັງຈັດຕັ້ງປະຕິບັດ,ມີຂໍ້ສະດວກ,ຂໍ້ຫຍຸ້ງຍາກ,ໃຫ້ຄະນະຮັບຜິດຊອບຄຸ້ມຄອງບໍລິຫານກອງທຶນຂັ້ນແຂວງ, ຈັດກອງປະຊຸມສະຫຼູບຕີລາຄາ ແລະ ຊອກວິທີການແກ້ໄຂໃຫ້ໄດ້ຮັບຜົນດີ.

ຫ້ອງວ່າການປົກຄອງແຂວງ, ມີໜ້າທີ່ຊ່ວຍເຈົ້າແຂວງໃນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

**ເຈົ້າແຂວງ**

ດຣ.ນາມ ວິຍະເກດ